**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ເລກທີ 454/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 30 ພຶດສະພາ 2019

# ຂໍ້ຕົກລົງ
# ວ່າດ້ວຍ ການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນຳເງິນສົດ ເຂົ້າ-ອອກ ສປປ ລາວ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ ລົງວັນທີ 22 ທັນວາ 2014;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງກົມນະໂຍບາຍເງິນຕາ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດບັນດາຫຼັກການ, ລະບຽບການ ແລະ ຂັ້ນຕອນໃນການເປີດບັນຊີເງິນຝາກ, ການໂອນເງິນ ແລະ ການນຳເງິນສົດ ເຂົ້າ-ອອກ ສປປ ລາວ ເພື່ອຜັນຂະຫຍາຍເນື້ອໃນຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ. ແນໃສ່ເຮັດໃຫ້ການດຳເນີນທຸລະກຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສອດຄ່ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ, ປະກອບສ່ວນໃນການຄຸ້ມຄອງເງິນຕາຕ່າງປະເທດໃຫ້ມີປະສິດທິຜົນ.

**ມາດຕາ 2 ການເປີດບັນຊີເງິນຝາກ**

ການເປີດບັນຊີເງິນຝາກ ແມ່ນການນຳເງິນມາຝາກໄວ້ໃນທະນາຄານທຸລະກິດໃດໜຶ່ງ ໂດຍທະນາຄານທຸລະກິດຈະອອກເລກບັນຊີເງິນຝາກໃຫ້ແກ່ຜູ້ຝາກເງິນ ເພື່ອນຳໃຊ້ໃນການດຳເນີນທຸລະກຳການຝາກ, ຖອນ ແລະ ໂອນເງິນ ຫຼື ທຸລະກຳອື່ນທີ່ທະນາຄານທຸລະກິດໃຫ້ບໍລິການ, ຊຶ່ງປະເພດບັນຊີເງິນຝາກ ປະກອບມີ ບັນຊີກະແສລາຍວັນ, ບັນຊີເງິນຝາກປະຢັດ, ບັນຊີເງິນຝາກປະຈຳ ແລະ ບັນຊີເງິນຝາກປະເພດອື່ນ ທີ່ທະນາຄານທຸລະກິດໃຫ້ບໍລິການ.

**ມາດຕາ 3 ການໂອນເງິນ ແລະ ການນຳເງິນສົດ ເຂົ້າ-ອອກ ສປປ ລາວ**

ການໂອນເງິນ ແມ່ນການດຳເນີນທຸລະກຳໂອນເງິນ ເຂົ້າ-ອອກ ສປປ ລາວ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮອງຮັບການຊຳລະສະສາງການຄ້າ ແລະ ການລົງທຶນ ແລະ ທຸລະກຳອື່ນ ໂດຍດຳເນີນທຸລະກຳຜ່ານລະບົບທະນາຄານ.

ການນຳເງິນສົດ ເຂົ້າ-ອອກ ສປປ ລາວ ແມ່ນການເຄື່ອນຍ້າຍເງິນສົດ ເປັນເງິນກີບ ແລະ/ຫຼື ເງິນຕາຕ່າງປະເທດ ຈາກປະເທດໃດໜຶ່ງ ເຂົ້າມາ ສປປ ລາວ ຫຼື ຈາກ ສປປ ລາວ ໄປຍັງອີກປະເທດໜຶ່ງ ໂດຍຜ່ານດ່ານສາກົນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກຳການເປີດບັນຊີ ແລະ ນຳໃຊ້ບັນຊີເງິນຝາກ, ການໂອນ ແລະ ການນຳເງິນຕາເປັນເງິນສົດ ເຂົ້າ-ອອກ ສປປ ລາວ.

## ໝວດທີ 2
## ການເປີດບັນຊີເງິນຝາກ ຢູ່ ສປປ ລາວ ແລະ ຕ່າງປະເທດ

**ມາດຕາ 5 ການເປີດບັນຊີເງິນຝາກ ຢູ່ ສປປລາວ**

ຜູ້ມີ ແລະ ບໍ່ມີພູມລຳເນົາຢູ່ ສປປ ລາວ ທີ່ມີຈຸດປະສົງເປີດບັນຊີເງິນຝາກ ຢູ່ ສປປ ລາວ ຕ້ອງປະກອບສຳນວນເອກະສານ ເພື່ອສະເໜີຂໍເປີດບັນຊີນຳທະນາຄານທຸລະກິດ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການເປີດບັນຊີເງິນຝາກເປັນເງິນກີບ ຕ້ອງປະກອບສຳນວນເອກະສານ ດັ່ງນີ້:
   ກ. ຜູ້ມີພູມລຳເນົາ ຢູ່ ສປປ ລາວ
   - ໃບສະເໜີຂໍເປີດບັນຊີເງິນຝາກຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ (ສຳລັບບຸກຄົນລາວ);
   - ສຳເນົາໜັງສືຜ່ານແດນ Passport (ສຳລັບບຸກຄົນຕ່າງປະເທດທີ່ມາເຮັດວຽກຢູ່ ສປປ ລາວ);
   - ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ (ສຳລັບນິຕິບຸກຄົນ).

   ຂ. ຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ
   - ໃບສະເໜີຂໍເປີດບັນຊີເງິນຝາກຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາໜັງສືຜ່ານແດນ Passport (ສຳລັບບຸກຄົນຕ່າງປະເທດ);
   - ສຳເນົາເອກະສານຢັ້ງຢືນ ຫຼື ສັນຍາຮັບເໝົາໃດໜຶ່ງ (ສຳລັບນິຕິບຸກຄົນຕ່າງປະເທດ)
2. ການເປີດບັນຊີເງິນຝາກເປັນເງິນຕາຕ່າງປະເທດຕ້ອງປະກອບສຳນວນເອກະສານ ດັ່ງນີ້:
   ກ. ຜູ້ມີພູມລຳເນົາ ຢູ່ ສປປ ລາວ
   - ໃບສະເໜີຂໍເປີດບັນຊີເງິນຝາກຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ (ສຳລັບບຸກຄົນລາວ);
   - ສຳເນົາໜັງສືຜ່ານແດນ Passport (ສຳລັບບຸກຄົນຕ່າງປະເທດທີ່ມາເຮັດວຽກຢູ່ ສປປ ລາວ);
   - ສຳເນົາໃບທະບຽນວິສາຫະກິດຫຼືໃບອະນຸຍາດລົງທຶນ (ສຳລັບນິຕິບຸກຄົນ).

ຂ. ຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ

- ໃບສະເໜີຂໍເປີດບັນຊີເງິນຝາກຕາມແບບພິມຂອງທະນາຄານທຸລະກິດ;
- ສຳເນົາໜັງສືຜ່ານແດນ Passport (ສຳລັບບຸກຄົນຕ່າງປະເທດ);
- ສຳເນົາເອກະສານຢັ້ງຢືນ ຫຼື ສັນຍາຮັບເໝົາໃດໜຶ່ງ (ສຳລັບນິຕິບຸກຄົນຕ່າງປະເທດ).

3. ການເປີດບັນຊີເງິນຕາຕ່າງປະເທດ ສະເພາະຮອງຮັບການຊຳລະສະສາງກັບຕ່າງປະເທດ ຕ້ອງປະກອບສຳນວນເອກະສານດັ່ງນີ້:

- ໃບສະເໜີຂໍເປີດບັນຊີເງິນຝາກຕາມແບບພິມຂອງທະນາຄານທຸລະກິດ;
- ສຳເນົາໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ;
- ສຳເນົາໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ;
- ສຳເນົາໃບຢັ້ງຢືນການປະຕິບັດພັນທະດ້ານອາກອນ ປະຈຳປີ.

ທະນາຄານທຸລະກິດ ຕ້ອງໃຊ້ດຸນພິນິດຂອງຕົນໃນການພິຈາລະນາເປີດບັນຊີເງິນຝາກໃຫ້ແກ່ລູກຄ້າ ບົນພື້ນຖານການຊອກຮູ້ລູກຄ້າ. ນອກຈາກເອກະສານທີ່ໄດ້ກຳນົດໃນຂໍ້ 1-3 ໃນມາດຕານີ້, ທະນາຄານທຸລະກິດສາມາດຮຽກເອົາເອກະສານອື່ນທີ່ກ່ຽວຂ້ອງກັບການເປີດບັນຊີເງິນຝາກ ໃນກໍລະນີທີ່ເຫັນວ່າ ຂໍ້ມູນທີ່ໄດ້ມາຍັງບໍ່ພຽງພໍໃນການຄົ້ນຄວ້າພິຈາລະນາ.

**ມາດຕາ 6 ການນຳໃຊ້ເງິນໃນບັນຊີເງິນຝາກ ຢູ່ ສປປ ລາວ**

ຜູ້ມີພູມລຳເນົາ ຢູ່ ສປປ ລາວ ສາມາດນຳເງິນກີບ ແລະ ເງິນຕາຕ່າງປະເທດ ທີ່ມີແຫຼ່ງທີ່ມາຖືກຕ້ອງຕາມກົດໝາຍ ຝາກເຂົ້າບັນຊີເງິນຝາກຂອງຕົນທີ່ເປີດນຳທະນາຄານທຸລະກິດ ຢູ່ ສປປ ລາວ, ຊຶ່ງເງິນໃນບັນຊີດັ່ງກ່າວ ສາມາດຖອນ ແລະ ຮັບດອກເບ້ຍ ຕາມປະເພດບັນຊີເງິນຝາກຂອງຕົນ ນຳທະນາຄານທຸລະກິດໄດ້.

ຜູ້ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດໂອນເງິນຕາຕ່າງປະເທດ ຫຼື ນຳເງິນສົດທີ່ມີແຫຼ່ງທີ່ມາຖືກຕ້ອງຕາມກົດໝາຍ ເຂົ້າມາ ສປປ ລາວ ເພື່ອເປີດບັນຊີເງິນຝາກ ເປັນສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ ນຳທະນາຄານທຸລະກິດ ຢູ່ ສປປ ລາວ, ຊຶ່ງເງິນໃນບັນຊີດັ່ງກ່າວ ສາມາດ ຖອນ ແລະ ຮັບດອກເບ້ຍ ຕາມປະເພດບັນຊີເງິນຝາກຂອງຕົນ ນຳທະນາຄານທຸລະກິດໄດ້. ສຳລັບບັນຊີເງິນຝາກສະກຸນເງິນກີບ ທີ່ຜ່ານການແລກປ່ຽນເງິນຕາຕ່າງປະເທດ ສາມາດແລກປ່ຽນເປັນເງິນຕາຕ່າງປະເທດຄືນໄດ້.

ສຳລັບບັນຊີເງິນຝາກເປັນເງິນຕາຕ່າງປະເທດ ສະເພາະຮອງຮັບການຊຳລະສະສາງກັບຕ່າງປະເທດ ສາມາດນຳເງິນຕາຕ່າງປະເທດຝາກເຂົ້າບັນຊີດັ່ງກ່າວໂດຍກົງ ຫຼື ເງິນຕາຕ່າງປະເທດທີ່ໄດ້ຈາກການແລກປ່ຽນ ຝາກເຂົ້າບັນຊີດັ່ງກ່າວ, ຊຶ່ງບັນຊີເງິນຝາກດັ່ງກ່າວ ສາມາດໂອນຊຳລະສະສາງກັບຕ່າງປະເທດເທົ່ານັ້ນ.

**ມາດຕາ 7 ການເປີດບັນຊີເງິນຝາກ ຢູ່ ຕ່າງປະເທດ**

ຜູ້ມີພູມລຳເນົາ ຢູ່ ສປປ ລາວ ທີ່ມີຈຸດປະສົງເປີດບັນຊີເງິນຝາກ ຢູ່ ຕ່າງປະເທດ ຕ້ອງປະກອບສຳນວນເອກະສານ ເພື່ອສະເໜີຂໍອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ນຳກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ຕາມແຕ່ລະເປົ້າໝາຍດັ່ງນີ້:

1. ໃບຄຳຮ້ອງ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
2. ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດລົງທຶນ;
3. ໃບອະນຸຍາດດຳເນີນທຸລະກິດ ອອກໂດຍຂະແໜງການທີ່ກ່ຽວຂ້ອງ;

4. ໃບຢັ້ງຢືນການປະຕິບັດພັນທະອາກອນ ປະຈຳປີ;
5. ໃບຢັ້ງຢືນຖານະການເງິນ ຫຼື ໃບລາຍງານບັນຊີສຳຮອງ (Statement);
6. ເອກະສານທີ່ກ່ຽວຂ້ອງຕາມແຕ່ລະເປົ້າໝາຍໃນການເປີດບັນຊີຢູ່ຕ່າງປະເທດ ທີ່ໄດ້ກຳນົດໄວ້ໃນຂໍ້ ກ ເຖິງ ຂໍ້ ງ ດັ່ງນີ້:

ກ. ທຸລະກິດຜ່ານແດນ ເປັນຕົ້ນ ການຂົນສົ່ງທາງບົກ, ທາງອາກາດ ແລະທາງນໍ້າ, ການໄປສະນີ, ການປະກັນໄພ, ການທ່ອງທ່ຽວ, ການນຳແຮງງານອອກ ແລະ ການຮັບເໝົາໂຄງການຢູ່ຕ່າງປະເທດ ຕ້ອງປະກອບສຳນວນເອກະສານດັ່ງນີ້:
- ສຳເນົາສັນຍາຮັບເໝົາໂຄງການຢູ່ຕ່າງປະເທດ (ກໍລະນີຮັບເໝົາໂຄງການຢູ່ຕ່າງປະເທດ);
- ເອກະສານຢັ້ງຢືນທີ່ຕິດພັນກັບລາຍຮັບຈາກຕ່າງປະເທດ (ກໍລະນີການຂົນສົ່ງຂ້າມແດນ,ການໄປສະນີ, ການປະກັນໄພ, ການທ່ອງທ່ຽວ ຫຼື ການນຳແຮງງານອອກ).

ຂ. ຮອງຮັບ ແລະ ຊຳລະ ເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ
- ສຳເນົາໃບອະນຸຍາດໃຫ້ກູ້ຢືມເງິນ ຫຼື ຮັບສິນເຊື່ອການຄ້າຈາກຕ່າງປະເທດ ອອກໂດຍທະນາຄານແຫ່ງ ສປປ ລາວ.

ຄ. ສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າຢູ່ຕ່າງປະເທດຕາມການອະນຸຍາດຂອງອົງການທີ່ກ່ຽວຂ້ອງ;
- ສຳເນົາໃບອະນຸຍາດເປີດສາຂາ ຫຼື ຫ້ອງການຜູ້ຕາງໜ້າ ຢູ່ຕ່າງປະເທດ ອອກໂດຍຂະແໜງການທີ່ກ່ຽວຂ້ອງຂອງ ສປປ ລາວ.

ງ. ລົງທຶນຢູ່ຕ່າງປະເທດ
- ສຳເນົາໃບອະນຸຍາດໄປລົງທຶນຢູ່ຕ່າງປະເທດ ອອກໂດຍກະຊວງແຜນການ ແລະ ການລົງທຶນ;
- ສຳເນົາໃບອະນຸຍາດລົງທຶນຈາກຕ່າງປະເທດ ອອກໂດຍອົງການທີ່ກ່ຽວຂ້ອງ ຂອງປະເທດທີ່ຈະໄປລົງທຶນ ຫຼື ສັນຍາການຮ່ວມທຶນກັບບໍລິສັດ ຢູ່ຕ່າງປະເທດ ທີ່ມີການຢັ້ງຢືນຈາກຂະແໜງການກ່ຽວຂ້ອງ.

**ມາດຕາ 8 ການພິຈາລະນາການເປີດບັນຊີເງິນຝາກຢູ່ຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຄົ້ນຄວ້າ ແລະ ພິຈາລະນາການເປີດບັນຊີເງິນຝາກຢູ່ຕ່າງປະເທດ ຂອງຜູ້ມີພູມລຳເນົາ ຢູ່ ສປປ ລາວ ທີ່ບໍ່ໄດ້ກຳນົດໄວ້ໃນມາດຕາ 7 ຂໍ້ ກ ເຖິງ ຂໍ້ ງ ໂດຍຜູ້ສະເໜີຂໍອະນຸຍາດຕ້ອງປະກອບເອກະສານທີ່ກ່ຽວຂ້ອງຕາມຈຸດປະສົງໃນການເປີດບັນຊີ ແລະ ເອກະສານອື່ນ ທີ່ທະນາຄານແຫ່ງ ສປປ ລາວ ເຫັນວ່າມີຄວາມຈຳເປັນ, ຊຶ່ງຈຸດປະສົງໃນການຂໍອະນຸຍາດເປີດບັນຊີຢູ່ຕ່າງປະເທດ ຕ້ອງສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ທະນາຄານແຫ່ງ ສປປ ລາວ ຈະຄົ້ນຄວ້າ ແລະ ແຈ້ງຕອບຜົນການພິຈາລະນາການສະເໜີຂໍອະນຸຍາດເປີດບັນຊີຢູ່ຕ່າງປະເທດ ພາຍໃນກຳນົດເວລາ 10 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບສຳນວນຄຳຮ້ອງຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດເປີດບັນຊີຢູ່ຕ່າງປະເທດ ຕ້ອງເສຍຄ່າຄົ້ນຄວ້າເອກະສານຈຳນວນ 100.000 ກີບ/ຄັ້ງ.

ຜູ້ທີ່ໄດ້ຮັບອະນຸຍາດເປີດບັນຊີເງິນຝາກຢູ່ຕ່າງປະເທດ ຕ້ອງລາຍງານການເຄື່ອນໄຫວບັນຊີຂອງຕົນໃຫ້ທະນາຄານແຫ່ງ ສປປ ລາວ ຊາບເປັນປະຈຳເດືອນ.

ການເປີດບັນຊີເງິນຝາກຢູ່ຕ່າງປະເທດ ຂອງນິຕິບຸກຄົນທີ່ບໍ່ແມ່ນທະນາຄານທຸລະກິດ ແລະ ສະຖາບັນການເງິນ ອະນຸຍາດໃຫ້ເປີດສະເພາະບັນຊີເງິນຝາກກະແສລາຍວັນເທົ່ານັ້ນ.

ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຕັ້ງຢູ່ ສປປ ລາວ ທີ່ມີຈຸດປະສົງເປີດບັນຊີເງິນຝາກຢູ່ຕ່າງປະເທດ ຕ້ອງສະເໜີຂໍອະນຸຍາດ ຈາກກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມຄຸ້ມຄອງສະຖາບັນການເງິນ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ການໂອນເງິນ ແລະ ການນຳເງິນສົດ ເຂົ້າ-ອອກ ສປປ ລາວ

### ມາດຕາ 9 ການໂອນເງິນຕາຕ່າງປະເທດ ເຂົ້າ ສປປ ລາວ

ຜູ້ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດໂອນເງິນຕາຕ່າງປະເທດ ເຂົ້າ ສປປ ລາວ ໄດ້ໂດຍບໍ່ຈຳກັດຈຳນວນ ໂດຍໂອນເຂົ້າບັນຊີເງິນຝາກຂອງຕົນທີ່ເປີດຢູ່ທະນາຄານທຸລະກິດໃດໜຶ່ງ ຢູ່ ສປປ ລາວ ແລະ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 10 ການໂອນເງິນຕາຕ່າງປະເທດ ອອກ ສປປ ລາວ

ຜູ້ມີ ແລະບໍ່ມີພູມລຳເນົາ ຢູ່ ສປປ ລາວ ທີ່ມີຈຸດປະສົງໂອນເງິນຕາຕ່າງປະເທດອອກ ສປປ ລາວ ຕ້ອງປະກອບເອກະສານທີ່ກ່ຽວຂ້ອງຢ່າງຖືກຕ້ອງ ແລະ ຄົບຖ້ວນ ເພື່ອສະເໜີຂໍໂອນເງິນນຳທະນາຄານທຸລະກິດ ຕາມແຕ່ລະເປົ້າໝາຍ ດັ່ງນີ້:

1. ໂອນເງິນອອກ ສປປ ລາວ ໃນວົງເງິນບໍ່ເກີນ 100 ລ້ານກີບ ຕ້ອງປະກອບເອກະສານດັ່ງນີ້:
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ (Passport).

ກໍລະນີການໂອນເງິນອອກ ສປປ ລາວ ທີ່ມີວົງເງິນບໍ່ເກີນ 100 ລ້ານກີບ ຫາກເປັນການໂອນເງິນທີ່ມີຈຸດປະສົງນອນໃນ ຂໍ້ 2 ເຖິງ ຂໍ້ 7 ຂອງມາດຕານີ້ ຕ້ອງປະກອບເອກະສານທີ່ກ່ຽວຂ້ອງຢ່າງຖືກຕ້ອງ ແລະ ຄົບຖ້ວນຕາມທີ່ໄດ້ກຳນົດໄວ້ໃນແຕ່ລະເປົ້າໝາຍເພື່ອສະເໜີຂໍໂອນເງິນອອກ ສປປ ລາວ ນຳທະນາຄານທຸລະກິດ.

2. ໂອນຊຳລະຄ່າສິນຄ້າທີ່ນຳເຂົ້າຈາກຕ່າງປະເທດ ຕ້ອງປະກອບສຳນວນເອກະສານດັ່ງນີ້:
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາໃບຮຽກເກັບເງິນຄ່າສິນຄ້າ ຫຼື ບໍລິການ (Invoice) ອອກໂດຍຜູ້ສະໜອງສິນຄ້າ ຫຼື ບໍລິການ ຢູ່ຕ່າງປະເທດ;
   - ສຳເນົາໃບແຈ້ງພາສີນຳເຂົ້າເປັນລາຍລະອຽດ (ກໍລະນີນຳສິນຄ້າເຂົ້າມາແລ້ວ);
   - ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ.
3. ໂອນຊຳລະຄ່າບໍລິການທີ່ຕິດພັນກັບສິນຄ້າຂາເຂົ້າ ເຊັ່ນ: ຄ່າຂົນສົ່ງຜ່ານແດນ, ຄ່າປະກັນໄພ, ຄ່າຝາກສາງຜ່ານແດນ ແລະຄ່າບໍລິການອື່ນຕ້ອງປະກອບສຳນວນເອກະສານດັ່ງນີ້:
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາສັນຍາຂົນສົ່ງສິນຄ້າ (ກໍລະນີຊຳລະຄ່າບໍລິການຂົນສົ່ງ);

- ສຳເນົາສັນຍາປະກັນໄພ (ກໍລະນີຊຳລະຄ່າບໍລິການປະກັນໄພ);
- ສຳເນົາໃບຢັ້ງຢືນຮັບສິນຄ້າເຂົ້າສາງ (ກໍລະນີ ຊຳລະຄ່າບໍລິການຝາກສາງ);
- ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ.

4. ໂອນຊຳລະໜີ້ເງິນກູ້ ຫຼື ສິນເຊື່ອການຄ້າໃຫ້ຕ່າງປະເທດ ຕ້ອງປະກອບສຳນວນເອກະສານດັ່ງນີ້:
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາໃບອະນຸຍາດໃຫ້ກູ້ ຫຼື ຮັບເງິນກູ້ ຫຼື ຮັບສິນເຊື່ອການຄ້າຈາກຕ່າງປະເທດ ອອກໂດຍທະນາຄານແຫ່ງ ສປປ ລາວ;
   - ສຳເນົາໃບຢັ້ງຢືນການນຳເຂົ້າທຶນຈາກຕ່າງປະເທດ ທີ່ໄດ້ລະບຸທຶນນຳເຂົ້າທີ່ເປັນເງິນກູ້ອອກໂດຍທະນາຄານແຫ່ງ ສປປ ລາວ (ກໍລະນີເປັນນິຕິບຸກຄົນທີ່ເປັນການລົງທຶນຈາກຕ່າງປະເທດ);
   - ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ.
5. ໂອນເງິນກຳໄລ, ເງິນປັນຜົນ, ຕົ້ນທຶນ, ດອກເບ້ຍ ແລະ ຄ່າບໍລິການອື່ນຂອງນັກລົງທຶນຕ່າງປະເທດ ແລະ ຄ່າແຮງງານຂອງຄົນຕ່າງປະເທດກັບຄືນປະເທດ ຫຼື ໄປປະເທດທີສາມ ຕ້ອງປະກອບສຳນວນເອກະສານດັ່ງນີ້:

   ກ. ໂອນກຳໄລ, ເງິນປັນຜົນ ແລະ ຕົ້ນທຶນ
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາໜັງສືມະຕິຕົກລົງແບ່ງປັນຜົນກຳໄລ ຫຼື ເງິນປັນຜົນ ຂອງກອງປະຊຸມສະພາບໍລິຫານຫຼືກອງປະຊຸມຂາຮຸ້ນ (ກໍລະນີໂອນເງິນກຳໄລ ຫຼື ເງິນປັນຜົນກັບຄືນປະເທດ);
   - ສຳເນົາເອກະສານຢັ້ງຢືນທີ່ກ່ຽວຂ້ອງກັບການປ່ຽນແປງເງິນລົງທຶນ ຫຼື ປິດກິດຈະການ (ກໍລະນີໂອນເງິນລົງທຶນກັບຄືນປະເທດ);
   - ສຳເນົາໃບຢັ້ງຢືນການນຳເຂົ້າທຶນຈາກຕ່າງປະເທດ ອອກໂດຍທະນາຄານແຫ່ງ ສປປ ລາວ (ກໍລະນີໂອນເງິນລົງທຶນກັບຄືນປະເທດ);
   - ສຳເນົາເອກະສານຢັ້ງຢືນການລົງທຶນໃນຫຼັກຊັບ ຢູ່ ສປປ ລາວ ຈາກພາກສ່ວນກ່ຽວຂ້ອງ (ກໍລະນີໂອນເງິນຈາກການລົງທຶນໃນຫຼັກຊັບກັບຄືນປະເທດ);
   - ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ.

   ຂ. ໂອນດອກເບ້ຍເງິນຝາກ
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາໜັງສືຜ່ານແດນ (Passport);
   - ສຳເນົາໃບຢັ້ງຢືນເງິນຝາກ (ຖ້າມີ);
   - ສຳເນົາໃບລາຍງານບັນຊີສຳຮອງ (Statement).

   ຄ. ໂອນຄ່າແຮງງານກັບຄືນປະເທດ
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາໜັງສືຜ່ານແດນ (Passport);
   - ສຳເນົາບັດອະນຸຍາດເຮັດວຽກ ຂອງຄົນຕ່າງປະເທດ ຫຼື ໃບຢັ້ງຢືນການເປັນພະນັກງານ ອອກໂດຍຂະແໜງທີ່ກ່ຽວຂ້ອງ.

6. ໂອນເງິນໄປລົງທຶນຢູ່ຕ່າງປະເທດ ຕ້ອງປະກອບສຳນວນເອກະສານ ດັ່ງນີ້:
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ໃບອະນຸຍາດນຳທຶນອອກໄປລົງທຶນຢູ່ຕ່າງປະເທດ ອອກໂດຍທະນາຄານແຫ່ງ ສປປ ລາວ;
   - ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ (ສຳລັບບຸກຄົນ);
   - ສຳເນົາໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວຂ້ອງ (ສຳລັບນິຕິບຸກຄົນ).
7. ໂອນຊຳລະຄ່າຮຽນ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບຢູ່ຕ່າງປະເທດ ຕ້ອງປະກອບສຳນວນເອກະສານ ຕາມແຕ່ລະກໍລະນີດັ່ງນີ້:

   ກ. ໂອນຊຳລະຄ່າຮຽນ
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ;
   - ສຳເນົາໜັງສືຜ່ານແດນ (Passport);
   - ສຳເນົາໃບແຈ້ງຊຳລະຄ່າຮຽນຈາກສະຖາບັນການສຶກສາທີ່ກ່ຽວຂ້ອງຢູ່ຕ່າງປະເທດ.

   ຂ. ໂອນໄປທ່ອງທ່ຽວ ແລະຢ້ຽມຢາມ
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ (Passport);
   - ສຳເນົາໜັງສືເດີນທາງທີ່ໄດ້ຮັບວິຊ່າ ອອກໂດຍສະຖານທູດຂອງປະເທດທີ່ຜູ້ກ່ຽວຈະເດີນທາງໄປ ຫຼື ປີ້ໂດຍສານທີ່ລະບຸລາຍລະອຽດການເດີນທາງ.

   ຄ. ໂອນຊຳລະຄ່າປິ່ນປົວສຸຂະພາບ
   - ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
   - ສຳເນົາບັດປະຈຳຕົວ ຫຼື ໜັງສືຜ່ານແດນ (Passport);
   - ສຳເນົາໃບແຈ້ງຊຳລະຄ່າປິ່ນປົວຈາກໂຮງໝໍທີ່ໄປປິ່ນປົວຢູ່ຕ່າງປະເທດ ຫຼື ໃບອະນຸຍາດໃຫ້ໄປປິ່ນປົວຢູ່ຕ່າງປະເທດຈາກຄະນະອຳນວຍການໂຮງໝໍລັດ ຫຼື ເອກະຊົນ, ຂັ້ນແຂວງ ຫຼື ນະຄອນຫຼວງ.
8. ການໂອນເງິນ ເພື່ອຈຸດປະສົງອື່ນ

   ຜູ້ມີ ແລະບໍ່ມີພູມລຳເນົາ ຢູ່ ສປປ ລາວ ທີ່ຕ້ອງການໂອນເງິນໄປຕ່າງປະເທດ ແຕ່ເປົ້າໝາຍຂອງການໂອນເງິນບໍ່ໄດ້ກຳນົດໄວ້ໃນຂໍ້ 1 ເຖິງ ຂໍ້ 7 ຂອງມາດຕານີ້ ຕ້ອງປະກອບສຳນວນເອກະສານທີ່ກ່ຽວຂ້ອງຢ່າງຖືກຕ້ອງ ແລະ ຄົບຖ້ວນ ເພື່ອເປັນເອກະສານຢັ້ງຢືນການສະເໜີຂໍໂອນເງິນໄປຕ່າງປະເທດ ນຳທະນາຄານທຸລະກິດ ແລະ ຕ້ອງປະຕິບັດຕາມລະບຽບການຂອງທະນາຄານທຸລະກິດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ.

ນອກຈາກເອກະສານທີ່ໄດ້ກຳນົດໃນ ຂໍ້ 1-8 ໃນມາດຕານີ້, ທະນາຄານທຸລະກິດ ສາມາດຮຽກເອົາເອກະສານອື່ນທີ່ກ່ຽວຂ້ອງກັບການໂອນເງິນອອກ ສປປ ລາວ ໃນກໍລະນີທີ່ເຫັນວ່າ ຂໍ້ມູນທີ່ໄດ້ມາຍັງບໍ່ພຽງພໍໃນການຄົ້ນຄວ້າພິຈາລະນາ.

ທະນາຄານທຸລະກິດ ຕ້ອງໃຊ້ດຸນພິນິດຂອງຕົນໃນການພິຈາລະນາການໂອນເງິນໄປຕ່າງປະເທດໃນແຕ່ລະເປົ້າໝາຍຕາມຄວາມເໝາະສົມ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ. ພ້ອມທັງຕ້ອງເກັບກຳຂໍ້

ມູນການດຳເນີນທຸລະກຳການໂອນເງິນຕາຕ່າງປະເທດ ເຂົ້າ-ອອກ ສປປ ລາວ ຂອງລູກຄ້າ ເພື່ອລາຍງານໃຫ້ແກ່ທະນາຄານແຫ່ງ ສປປ ລາວ ຊາບ ຢ່າງເປັນປົກກະຕິ ແລະ ຕ້ອງລາຍງານທຸລະກຳທີ່ສົງໄສວ່າເປັນການຟອກເງິນ ຫຼືການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ແກ່ສຳນັກງານຂໍ້ມູນຕ້ານການຟອກເງິນ.

**ມາດຕາ 9 ລາຍຮັບເປັນເງິນຕາຕ່າງປະເທດ**

ຜູ້ມີພູມລຳເນົາ ຢູ່ ສປປ ລາວ ທີ່ມີລາຍຮັບຈາກການສົ່ງອອກສິນຄ້າ-ບໍລິການ ແລະ ທຸກລາຍຮັບທີ່ໄດ້ຈາກຕ່າງປະເທດ ຕ້ອງໂອນລາຍຮັບທັງໝົດເຂົ້າບັນຊີເງິນຝາກຂອງຕົນທີ່ເປີດຢູ່ທະນາຄານທຸລະກິດ ຢູ່ ສປປ ລາວ ຢ່າງຄົບຖ້ວນພາຍໃນ 120 ວັນນັບແຕ່ວັນທີ່ໄດ້ຮັບຊຳລະ.

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາອະນຸຍາດໃຫ້ຜູ້ມີພູມລຳເນົາ ຢູ່ ສປປ ລາວ ຮັກສາລາຍຮັບໄວ້ບັນຊີເງິນຝາກຢູ່ຕ່າງປະເທດ ສະເພາະຈຸດປະສົງເພື່ອຊຳລະໜີ້ເງິນກູ້ ຫຼື ສິນເຊື່ອການຄ້າກັບຕ່າງປະເທດເທົ່ານັ້ນ. ສ່ວນລາຍຮັບທີ່ຍັງເຫຼືອຈາກການຊຳລະໜີ້ໃຫ້ແກ່ຕ່າງປະເທດຕ້ອງໂອນເຂົ້າມາ ສປປ ລາວ ທັງໝົດ.

**ມາດຕາ 10 ການນຳເງິນສົດ ເຂົ້າ-ອອກ ສປປ ລາວ**

ຜູ້ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດນຳເງິນສົດເປັນເງິນກີບ ແລະ ເງິນຕາຕ່າງປະເທດ ເຂົ້າ ສປປ ລາວ ໄດ້ໃນວົງເງິນບໍ່ເກີນ ຫຼື ທຽບເທົ່າ 100 ລ້ານກີບ, ຖ້າເກີນຈຳນວນດັ່ງກ່າວຜູ້ກ່ຽວ ຕ້ອງແຈ້ງຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານສາກົນ ເພື່ອອອກໃບຢັ້ງຢືນການນຳເງິນສົດຈຳນວນທີ່ເກີນນັ້ນເຂົ້າ ສປປ ລາວ ໂດຍປະກອບຂໍ້ມູນຕາມແບບພິມໃບແຈ້ງເຄື່ອງຕິດຕົວຜູ້ໂດຍສານຂອງກົມພາສີ ກະຊວງການເງິນ.

ຜູ້ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ສາມາດນຳເງິນຕາເປັນເງິນສົດອອກ ສປປ ລາວ ໄດ້ໃນວົງເງິນບໍ່ເກີນ ຫຼື ທຽບເທົ່າ 100 ລ້ານກີບ, ຖ້າເກີນຈຳນວນດັ່ງກ່າວຜູ້ກ່ຽວຕ້ອງສະເໜີຂໍອະນຸຍາດ ນຳກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ເພື່ອອອກໃບອະນຸຍາດນຳເງິນສົດຈຳນວນທີ່ເກີນນັ້ນອອກ ສປປ ລາວ ໂດຍປະກອບຂໍ້ມູນຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ ແລະ ປະກອບເອກະສານຫຼັກຖານຢັ້ງຢືນທີ່ມາຂອງເງິນຈຳນວນດັ່ງກ່າວ.

ຜູ້ມີ ແລະ ບໍ່ມີພູມລຳເນົາ ຢູ່ ສປປ ລາວ ທີ່ມີໃບຢັ້ງຢືນການນຳເງິນສົດເຂົ້າ ສປປ ລາວ ແລ້ວ ສາມາດແຈ້ງແລະສະແດງໃບຢັ້ງຢືນດັ່ງກ່າວ ຕໍ່ເຈົ້າໜ້າທີ່ພາສີປະຈຳດ່ານສາກົນ ເພື່ອເປັນຫຼັກຖານໃນການນຳເງິນສົດທີ່ມີຈຳນວນເງິນຕາມທີ່ໄດ້ລະບຸໃນໃບຢັ້ງຢືນນັ້ນອອກ ສປປ ລາວ ໂດຍບໍ່ຕ້ອງຂໍອະນຸຍາດຈາກທະນາຄານແຫ່ງ ສປປ ລາວ. ແຕ່ຖ້າຈຳນວນເງິນສົດທີ່ຈະນຳອອກ ສປປ ລາວ ຫາກມີຈຳນວນເງິນເກີນທີ່ໄດ້ກຳນົດໄວ້ໃນໃບຢັ້ງຢືນການນຳເງິນສົດເຂົ້າ ສປປ ລາວ ນັ້ນ ຕ້ອງໄດ້ສະເໜີຂໍອະນຸຍາດນຳເງິນສົດຈຳນວນທີ່ເກີນອອກ ສປປ ລາວ ນຳກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ໂດຍປະກອບຂໍ້ມູນຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ ແລະ ປະກອບເອກະສານຫຼັກຖານຢັ້ງຢືນແຫຼ່ງທີ່ມາຂອງເງິນຈຳນວນດັ່ງກ່າວ ຢ່າງຖືກຕ້ອງ ແລະ ຄົບຖ້ວນ.

ທະນາຄານແຫ່ງ ສປປ ລາວ ຈະຄົ້ນຄວ້າພິຈາລະນາ ແລະ ແຈ້ງຕອບຜົນການສະເໜີຂໍອະນຸຍາດນຳເງິນສົດອອກ ສປປ ລາວ ພາຍໃນກຳນົດເວລາ 2 ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບສຳນວນຄຳຮ້ອງຄົບຖ້ວນ ແລະຖືກຕ້ອງເປັນຕົ້ນໄປ.

## ໝວດທີ 4
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 11 ຂໍ້ຫ້າມ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ກ່ອນການໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
2. ເປີດບັນຊີຢູ່ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;
3. ຂາດການລາຍງານການປະຕິບັດສັນຍາເງິນກູ້ ຫຼື ສິນເຊື່ອການຄ້າກັບຕ່າງປະເທດ;
4. ປິດບັງຂໍ້ມູນ ຫຼື ລາຍງານຂໍ້ມູນບໍ່ຖືກຕ້ອງຕາມຄວາມເປັນຈິງ ແລະ ນຳໃຊ້ເງິນກູ້ບໍ່ສອດຄ່ອງຕາມຈຸດປະສົງໃນການກູ້ຢືມ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 12 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຈະຖືກກ່າວເຕືອນ ແລະ ປະຕິບັດມາດຕະການປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ແລະ 49 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 13 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ທະນາຄານແຫ່ງ ສປປ ລາວ ປະຈຳພາກ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນ.

ທະນາຄານທຸລະກິດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີໜ້າທີ່ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 14 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ບັນດາຂໍ້ຕົກລົງ ຫຼື ລະບຽບການໃດທີ່ນຳໃຊ້ໃນເມື່ອກ່ອນ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ.ລ ຜູ້ວ່າການ

ສອນໄຊ ສິດພະໄຊ